ວາລະສານວິທະຍາສາດສັງຄົມ (ວວສ) ສະບັບທີ 25 ຊຸດທີ 2 (2025) 82-94

ວາລະສານວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ
ລະຫັດປະຈໍາວາລະສານສາກົນ ISSN: 2664-6331 | E-ISSN: 3104-8536
Homepage: https://ssj.sjnl.la/
https://doi.org/10.71026/ss.2025.02010

# ການຄຸ້ມຄອງການນໍາໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ 19 (ສຶກສາກໍລະນີ: ນະຄອນຫຼວງວຽງຈັນ, ແຂວງອຸດົມໄຊ ແລະ ແຂວງບໍ່ແກ້ວ)

ຍອດຊາຍ ດາລາສັກ, ໂສພາພອນ ສຸລິຍະວົງ, ບົງສະຫວັນ ບຸດດາວົງ, ຄໍາເສັງ ປັດສິມມະວົງ ແລະ ໄກສອນ ດາລາສັກ
ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
ອີເມວ: Y.dalasack@nuol.edu.la

**ຂໍ້ມູນບົດຄວາມ:** **ວັນທີສົ່ງ 16/6/2025** **ວັນທີປັບປຸງ 16/8/2025** **ວັນທີຕອບຮັບ 10/10/2025**

**ບົດຄັດຫຍໍ້**

ການຄົ້ນຄວ້າໃນຄັ້ງນີ້ ມີຈຸດປະສົງສຶກສາກ່ຽວມາດຕະການໃນການຄຸ້ມຄອງການນໍາໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ແລະ ການນໍາໃຊ້ແຕ່ລະມາດຕະການຕ່າງໆຕໍ່ການຄຸ້ມຄອງການນໍາໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ, ສຶກສາເຖິງວິທີການໃນການຄຸ້ມຄອງການນໍາໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ແລະ ສຶກສາເຖິງບັນຫາ ແລະ ແນວທາງໃນການແກ້ໄຂບັນຫາໃນການຄຸ້ມຄອງການນໍາໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ. ການສຶກສາຄັ້ງນີ້ແມ່ນນໍາໃຊ້ການວິໄຈທາງດ້ານປະລິມານ ແລະ ຄຸນນະພາບ ຊຶ່ງມີກຸ່ມຕົວຢ່າງທັງໝົດ 80 ຄົນ ແລະ ສໍາພາດ 10 ຄົນ ພ້ອມທັງສົນທະນາກຸ່ມເພື່ອເຈາະເລິກປະເດັນທີ່ສໍາຄັນ ທີ່ເປັນຕົວແທນມາຈາກທະນາຄານແຫ່ງ ສ ປປລາວ ນະຄອນຫຼວງວຽງ, ການນໍາ ແລະ ພະນັກງານທະນາຄານແຫ່ງ ສປປລາວ ສາຂາພາກເໜືອ ແຂວງອຸດົມໄຊ, ຕົວແທນທະນາຄານທຸລະກິດ ແລະ ຕົວແທນຈາກປະຊາຊົນທົ່ວໄປ.

ຜົນຂອງການສຶກສາພົບວ່າ ນິຕິກໍາ ແລະ ຫຼັກການກ່ຽວກັບການຄຸ້ມຄອງການນໍາໃຊ້ເງິນຕາຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ -19 ຢູ່ ສປປ ລາວ ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງໃນລະດັບປານກາງໂດຍມີຄ່າສະເລ່ຍ ເທົ່າກັບ 2.99; ວິທີການໃນການຄຸ້ມຄອງການນໍາໃຊ້ເງິນຕາຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ -19 ຢູ່ ສປປ ລາວ ມີບັນຫາໃນລະດັບຫຼາຍ ໂດຍມີຄ່າສະເລ່ຍເທົ່າກັບ 3.63; ການຄຸ້ມຄອງຜູ້ປະກອບການບໍ່ໃຫ້ຊື້ຂາຍແລກປ່ຽນເງິນຕາຕ່າງປະເທດແບບຊະຊາຍໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ -19 ຢູ່ ສປປ ລາວ ມີບັນຫາໃນລະດັບປານກາງ ໂດຍມີຄ່າສະເລ່ຍ ເທົ່າກັບ 2.90; ການຄຸ້ມຄອງປະຊາຊົນບໍ່ໃຫ້ຊື້ຂາຍແລກປ່ຽນ ເງິນຕາຕ່າງປະເທດແບບຊະຊາຍໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ -19 ຢູ່ ສປປ ລາວ ມີບັນຫາໃນລະດັບປານກາງ ໂດຍມີຄ່າສະເລ່ຍ ເທົ່າກັບ 2.79; ສອດຄ່ອງກັບຄໍາໃຫ້ສໍາພາດຂອງຜູ້ມີສ່ວນກ່ຽວຂ້ອງທີ່ວ່າ ແຕ່ຍັງມີບັນຫາຫຼາຍດ້ານກໍຄືໃຊ້ເງິນຕາຕ່າງປະເທດຫຼາຍສະກຸນໃນການຊໍາລະ ເຮັດໃຫ້ປະຊາຊົນບໍ່ປະຕິບັດຕາມແຈ້ງການ ແລະ ລະບຽບກົດໝາຍທີ່ໃຫ້ໃຊ້ສະເພາະເງິນກີບ; ບັນຫາທີ່ບຸກຄົນ ແລະ ນິຕິບຸກຄົນສາມາດຖືຄອງເງິນຕາໃນຮູບແບບເງິນສົດ ເຮັດໃຫ້ການຄຸ້ມຄອງບໍ່ເປັນໄປຕາມລະບຽບການ ແລະ ຍາກຕໍ່ການຈັດຕັ້ງປະຕິບັດ ໃນຂະນະດຽວກັນຫຼາຍປະເທດແມ່ນໃຊ້ສະກຸນເງິນດຽວເປັນຫຼັກ; ບັນຫາເລື່ອງການປະສານງານລະຫວ່າງໜ່ວຍງານທີ່ກ່ຽວຂ້ອງຂອງພາກລັດຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ; ບັນຫາເລື່ອງການໂອນ-ຖອນເງິນສົດທີ່ເປັນເງິນຕາຕ່າງປະເທດແມ່ນເຮັດໄດ້ງ່າຍເກີນໄປ ໂດຍບໍ່ຈໍາເປັນຕ້ອງແຈ້ງຈຸດປະສົງຕໍ່ພາກສ່ວນທີ່ກ່ຽວຂ້ອງໃນການນໍາໃຊ້ເງິນຕາຕ່າງປະເທດດັ່ງກ່າວ.

**ຄໍາສັບສໍາຄັນ:** ການຄຸ້ມຄອງເງິນຕາ, ເງິນຕາຕ່າງປະເທດ, ໂຄວິດ-19, ສປປ ລາວ, ນະໂຍບາຍເສດຖະກິດ.

# Foreign Currency Management in Lao PDR After the Outbreak of COVID-19 (Case Study: Vientiane Capital, Oudomxay and Bokeo Province)

Yotxay DALASACK, Sophaphone SOULIYAVONG, Bongsavanh BOUDDAVONG, Khamseng PUTSIMMAVONG and Kaisone DALASACK
Faculty of Law and Political Science, National University of Laos
Email: Y.dalasack@nuol.edu.la

**Abstract**

The research aims to study the measures for managing foreign currency usage in Lao PDR, the implementation of these measures, and their effectiveness. It also explores methods for foreign currency management, identifies challenges, and proposes solutions. This study employs both quantitative and qualitative methods, with a sample of 80 survey respondents and 10 in-depth interviews, along with focus group discussions with representatives from the Bank of the Lao PDR in Vientiane Capital, the Northern Regional Branch in Oudomxay, commercial banks, and the general public.

The study found that legislation and principles regarding foreign currency management during the COVID-19 pandemic were moderately aligned with actual implementation (average score of 2.99). The methods for managing foreign currency usage faced significant problems (average score of 3.63). The management of businesses to prevent speculative foreign currency trading had moderate issues (average score of 2.90), as did the management of the general public (average score of 2.79). These findings are consistent with interviews, which highlighted several issues: the use of multiple foreign currencies for payments, leading to non-compliance with regulations requiring the use of the Lao Kip; individuals and legal entities holding foreign currency in cash, complicating management; inadequate coordination between relevant government agencies; and overly easy procedures for transferring and withdrawing foreign cash without declaring the purpose.

**Keywords:** Currency Management, Foreign Currency, COVID-19, Lao PDR, Economic Policy.

## ເຫດຜົນ ແລະ ຄວາມສຳຄັນຂອງບັນຫາ

ຈາກສະພາບການເໜັງຕີງຂອງອັດຕາແລກປ່ຽນຂອງເງິນກີບຜ່ານມາມີທັງປັດໄຈພາຍນອກ ແລະ ພາຍໃນ. ປັດໄຈພາຍນອກແມ່ນເກີດຈາກສະພາບການແຂງຄ່າຂອງເງິນຕາຕ່າງ ປະເທດ ໂດຍສະເພາະເງິນໂດລາ ແລະ ເງິນບາດໃນຕະຫຼາດສາກົນ. ສຳລັບປັດໄຈພາຍໃນເກີດມາຈາກພື້ນ ຖານເສດຖະກິດຂອງ ສປປ ລາວ ທີ່ຍັງອາໄສການນຳເຂົ້າສິນຄ້າເປັນຕົ້ນຕໍ, ການຜະລິດສິນຄ້າພາຍໃນປະເທດຍັງບໍ່ທັນເຂັ້ມແຂງເຮັດໃຫ້ມີການຂາດດຸນການຄ້າຢ່າງຕໍ່ເນື່ອງ ໃນຂະນະທີ່ແຫຼ່ງເງິນຕາເພື່ອຕອບສະໜອງຄວາມຕ້ອງການຂອງສັງຄົມເພື່ອຊຳລະຄ່າສິນຄ້ານຳເຂົ້າ ແລະ ການບໍລິການຍັງບໍ່ທັນດຸ່ນດ່ຽງພຽງພໍ (ທະນາຄານແຫ່ງ ສປປ ລາວ, 2020).

ຕໍ່ມາສະພາບອັດຕາແລກປ່ຽນໃນປີ 2020 ເຫັນວ່າຄ່າຂອງເງິນກີບທຽບໃສ່ເງິນໂດລາສະຫະລັດ ແລະ ບາດໄທແມ່ນມີທ່າອ່ຽງອ່ອນຄ່າລົງເມື່ອທຽບກັບປີຜ່ານມາ (ກະຊວງແຜນການ ແລະ ການລົງທຶນ, 2022). ໃນປີ 2021 ຈົນຮອດປັດຈຸບັນ ອັດຕາແລກປ່ຽນເງິນກີບທຽບເງິນຕາຕ່າງ ປະເທດ ຍັງສືບຕໍ່ອ່ອນຄ່າ, ສ່ວນໜຶ່ງແມ່ນຍ້ອນການແຂງຄ່າຂຶ້ນຂອງເງິນໂດລາ ແລະ ຈາກການເພີ່ມຂຶ້ນຂອງຄວາມຕ້ອງການນຳໃຊ້ເງິນຕາຕ່າງປະເທດຢູ່ພາຍໃນເພື່ອຊຳລະໜີ້ ແລະ ຊຳລະສະສາງການນຳເຂົ້າສິນຄ້າບໍລິໂພກ-ອຸປະໂພກທີ່ເພີ່ມຂຶ້ນ (ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, 2022).

ຕໍ່ກັບບັນຫາທີ່ພົ້ນເດັ່ນທີ່ສຸດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ 19 ແມ່ນເລື່ອງຄ່າຄອງຊີບຂອງປະຊາຊົນທີ່ມີທ່າອ່ຽງເພີ່ມຂຶ້ນເລື້ອຍໆ, ເປັນສາເຫດຂອງຄວາມຕ້ອງການຖືເງິນຕາຕ່າງປະເທດໃນການໃຊ້ຈ່າຍເພື່ອຊື້ສິນຄ້າເພີ່ມສູງຂຶ້ນ. ໂດຍສະເພາະໃນການຊື້ສິນຄ້າທີ່ຈຳເປັນຕ້ອງໄດ້ນຳເຂົ້າຈາກຕ່າງປະເທດຕ້ອງໄດ້ແລກປ່ຽນເງິນເປັນສະກຸນເງິນຕາຕ່າງປະເທດຈຶ່ງສາມາດຊື້ສິນຄ້າໄດ້. ອີກທັງການໃຊ້ບັງຄັບມາດຕະການຕ່າງໆ ຂອງພາກລັດຕໍ່ຜູ້ນຳໃຊ້ເງິນຕາຕ່າງປະເທດທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ.

ສະນັ້ນ, ການຄົ້ນຄວ້າກ່ຽວກັບການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃນຊ່ວງການແຜ່ລະບາດຂອງພະຍາດໂຄວິດ 19 ແມ່ນບັນຫາໜຶ່ງທີ່ມີຄວາມຈຳເປັນ ແລະ ຮີບດ່ວນ. ເພື່ອເຮັດໃຫ້ການຄຸ້ມຄອງດັ່ງກ່າວເຂົ້າສູ່ລະບຽບຫຼັກການຂອງກົດໝາຍ, ສອດຄ່ອງກັບແຜນພັດທະນາເສດຖະກິດ ແລະ ສັງຄົມ, ແລະ ເພື່ອຊອກຫາມາດຕະການໃນການຄຸ້ມຄອງທີ່ເໝາະສົມ, ທີມຄົ້ນຄວ້າຈຶ່ງເລືອກເອົາຫົວຂໍ້: ການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ພາຍຫຼັງການແຜ່ລະບາດຂອງເຊື້ອພະຍາດໂຄວິດ 19 ສຶກສາກໍລະນີ: ນະຄອນຫຼວງວຽງຈັນ, ແຂວງ ອຸດົມໄຊ ແລະ ແຂວງບໍ່ແກ້ວ ມາເປັນຫົວຂໍ້ຄົ້ນ ຄວ້າໃນຄັ້ງນີ້.

**ຈຸດປະສົງຂອງການຄົ້ນຄວ້າ**

1) ເພື່ອສຶກສາເຖິງ ນິຕິກຳ ແລະ ເອກະສານຕ່າງໆທີ່ກ່ຽວ ຂ້ອງກັບການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດຢູ່ ສປປ ລາວ ພາຍຫຼັງການແຜ່ລະບາດຂອງເຊື້ອພະຍາດ ໂຄວິດ 19.

2) ເພື່ອສຶກສາເຖິງ ວິທີການໃນການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ພາຍຫຼັງການແຜ່ລະບາດຂອງເຊື້ອພະຍາດ ໂຄວິດ 19.

3) ເພື່ອສຶກສາເຖິງ ບັນຫາການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ພາຍຫຼັງການແຜ່ລະບາດຂອງເຊື້ອພະຍາດ ໂຄວິດ 19 ໂດຍສະເພາະໃນນະຄອນຫຼວງວຽງຈັນ, ແຂວງ ອຸດົມໄຊ ແລະ ແຂວງ ບໍ່ແກ້ວ.

4) ເພື່ອສຶກສາເຖິງ ແນວທາງໃນການແກ້ໄຂບັນຫາການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ພາຍຫຼັງແຜ່ລະບາດຂອງເຊື້ອພະຍາດໂຄວິດ 19 ໂດຍສະເພາະໃນນະຄອນຫຼວງວຽງຈັນ, ແຂວງ ອຸດົມໄຊ ແລະ ແຂວງ ບໍ່ແກ້ວ.

**ຂອບເຂດຂອງການຄົ້ນຄວ້າ**

ການສຶກສາຄົ້ນຄວ້າໃນຄັ້ງນີ້ແມ່ນແນໃສ່ສຶກສາລະບຽບການທີ່ກ່ຽວຂ້ອງກັບການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ເປັນຕົ້ນແມ່ນມາດຕະການທາງກົດໝາຍທີ່ນຳໃຊ້ໃນການຄຸ້ມຄອງ ພ້ອມທັງສຶກສາເຖິງບັນຫາ ແລະ ຄວາມຫຍຸ້ງຍາກໃນການຄຸ້ມຄອງ ແລະ ສະເໜີແນະແນວທາງໃນການແກ້ໄຂບັນຫາດັ່ງກ່າວ. ການສຶກສານີ້ແມ່ນດຳເນີນການເກັບກຳຂໍ້ມູນຢູ່ 3 ແຂວງ ຄື ນະຄອນຫຼວງວຽງຈັນ, ແຂວງ ອຸດົມໄຊ ແລະ ແຂວງ ບໍ່ແກ້ວ ແລະ ຈະນຳໃຊ້ຂໍ້ມູນຍ້ອນຫຼັງແຕ່ ປີ 2019 ເຖິງ ປັດຈຸບັນ

**ທົບທວນວັນນະກຳທີ່ກ່ຽວຂ້ອງ**

**ແນວຄວາມຄິດກ່ຽວກັບການຄຸ້ມຄອງການນຳໃຊ້ເງິນຕາ**

ແນວຄິດທິດສະດີເງິນຕາ ໝາຍເຖິງ ສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ, ຊຶ່ງເງິນຕາຕ່າງປະເທດ ແມ່ນ ສະກຸນເງິນຂອງປະເທດອື່ນ ຊຶ່ງມີທະນະບັດ, ເງິນຫຼຽນ, ແຊັກ, ບັດຊຳລະ, ພັນທະບັດແລກເງິນ, ພັນທະບັດລັດຖະບານ, ພັນທະບັດວິສາຫະກິດ, ໃບຮຸ້ນ, ເອກະສານມີຄ່າອື່ນ ແລະ ຄຳທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ

ການຄຸ້ມຄອງເງິນຕາຕ່າງປະເທດ ແມ່ນການຈັດຕັ້ງປະຕິບັດບັນດາຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບເງິນຕາຕ່າງປະເທດ ແລະ ຄຳຂອງຜູ້ມີ ແລະ /ຫຼື ບໍ່ມີພູມລຳເນົາ ຢູ່ ສປປ ລາວ ໃນການຄອບຄອງ, ການນຳໃຊ້; ການຊຳລະກັບຕ່າງປະເທດກ່ຽວກັບການຄ້າ, ການບໍລິການ, ການຊ່ວຍເຫຼືອລ້າ, ການລົງທຶນ, ການກູ້ຢືມ, ການຝາກເງິນ ແລະ ການນຳເງິນສົດເຂົ້າບອອກ ສປປ ລາວໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກ່ຽວກັບເງິນຕາຕ່າງປະເທດ

ການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວທຸລະກິດແລະ/ຫຼື ດຳເນີນທຸລະກຳຢູ່ ສປປ ລາວ ສາມາດນຳໃຊ້ເງິນຕາຕ່າງປະເທດ ຕາມເປົ້າໝາຍ ດັ່ງນີ້:

1) ຊຳລະຄ່າສິນຄ້າທີ່ນຳເຂົ້າຈາກຕ່າງປະເທດ

2) ຊຳລະຄ່າບໍລິການ ທີ່ຕິດພັນກັບສິນຄ້າຂາເຂົ້າ-ຂາອອກໂດຍກົງ ເຊັ່ນ: ຄ່າຂົນສົ່ງຜ່ານແດນ, ຄ່າປະກັນໄພ, ຄ່າຝາກສາງຜ່ານແດນ ແລະ ຄ່າບໍລິການອື່ນ.

3) ຊຳລະໜີ້ເງິນກູ້ ແລະ ສິນເຊື່ອການຄ້າໃຫ້ຕ່າງ ປະເທດ

4) ໃຫ້ການຊ່ວຍເຫຼືອແກ່ຕ່າງປະເທດຕາມການຕົກລົງຂອງລັດຖະບານ.

5) ໂອນເງິນກຳໄລ, ເງິນປັນຜົນ, ຕົ້ນທຶນ, ດອກເບ້ຍ, ຄ່າບໍລິການອື່ນ ຂອງນັກລົງທຶນຕ່າງປະເທດ ແລະ ຄ່າແຮງງານຂອງຄົນຕ່າງປະເທດກັບຄືນປະເທດ ຫຼື ໄປປະເທດທີສາມ.

6) ໂອນເງິນໄປລົງທຶນຢູ່ຕ່າງປະເທດ

7) ສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບ ຢູ່ຕ່າງປະເທດ

8) ປະຕິບັດເປົ້າໝາຍອື່ນ ຕາມລະບຽບການທີ່ທະນາຄານແຫ່ງສປປ ລາວ ວາງອອກ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຄອບຄອງເງິນຕາຕ່າງປະເທດ ກ່ອນຈະນຳໃຊ້ເຂົ້າໃນການຮັບຊຳລະ ແລະ ຊຳລະຄ່າສິນຄ້າ, ບໍລິການ, ໜີ້ສິນ, ເງິນປັນຜົນ, ເບີກຈ່າຍເງິນເດືອນ ຫຼື ຄ່າແຮງງານ ແລະ ປະຕິບັດພັນທະຕໍ່ລັດໃນ ສປປ ລາວ ຕ້ອງແລກປ່ຽນເປັນເງິນກີບ ຊຶ່ງການແລກປ່ຽນດັ່ງກ່າວຕ້ອງດຳເນີນຢູ່ທະນາຄານທຸລະກິດເທົ່ານັ້ນ (ສະພາແຫ່ງຊາດ, 2022).

ຈາກແນວຄິດທິດສະດີກ່ຽວກັບການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດຢູ່ ສປປ ລາວ ສາມາດສະຫຼຸບໄດ້ວ່າ ໃນຄວາມຕ້ອງການຖືເງິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງແມ່ນຕ້ອງໄດ້ປະຕິບັດຕາມລະບຽບກົດໝາຍ ເພື່ອເຮັດໃຫ້ການຄຸ້ມຄອງການນຳໃຊ້ເງິນຕາເປັນໄປຢ່າງມີສະເຖຍລະພາບ ແຕ່ໃນທາງປະຕິບັດຍັງເຫັນໄດ້ວ່າບໍ່ສາດມາດເຮັດໄດ້ດີເທົ່າທີ່ຄວນອັນເນື່ອງມາຈາກການບໍ່ເຂັ້ມງວດຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ການລະເລີຍຕໍ່ລະບຽບຂອງກົດໝາຍຂອງຜູ້ຮັບຊຳລະ ແລະ ຜູ້ຊຳລະຄ່າສິນຄ້າຍັງໃຊ້ເປັນສະກຸນເງິນຕາຕ່າງປະເທດແບບຊະຊາຍ ໂດຍສະເພາະພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ 19 ເຮັດໃຫ້ຄວາມຕ້ອງການຖືເງິນຂອງບຸກຄົນ ແລະ ນິຕິບຸກຄົນຍິ່ງເພີ່ມສູງຂຶ້ນ ປະກອບກັບລາຄາສິນຄ້າໃນທ້ອງຕະຫຼາດມີທ່າອ່ຽງທີ່ສູງຂຶ້ນຈຶ່ງຍາກໃນການຈັດລະບຽບ ແລະ ຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃນການໃຊ້ຈ່າຍ.

ເພື່ອຢາກໃຫ້ການສຶກສາຄົ້ນຄວ້າໃນຄັ້ງນີ້ເປັນໄປຕາມຈຸດປະສົງທີ່ຕັ້ງໄວ້ ຈຶ່ງຈຳເປັນຕ້ອງໄດ້ຊອກຫາ ແລະ ສຶກສາຫາວິທີທາງໃນຂໍ້ກຳນົດຂອງກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດພາຍຫຼັງ ການແຜ່ລະບາດຂອງພະຍາດໂຄວິດ 19 ໂດຍສະເພາະແມ່ນຜູ້ປະກອບການ ແລະ ຜູ້ຊົມໃຊ້ຢູ່ ນະຄອນຫຼວງວຽງຈັນ, ອຸດົມໄຊ ແລະ ບໍ່ແກ້ວ ແລະ ເພື່ອເປັນແນວທາງໃນການອອກແບບຄຳຖາມສຳພາດ, ທາງຄະນະຜູ້ຄົ້ນຄວ້າ ຈຶ່ງໄດ້ທົບທວນບັນດານິຕິກຳທີ່ກ່ຽວຂ້ອງໂດຍສັງເຂບ ເຊັ່ນ: ຍົກເອົາບາງມາດຕາຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ກົດໝາຍວ່າດ້ວຍທະນາຄານທຸລະກິດ, ຂໍ້ຕົກລົງວ່າດ້ວຍທຸລະກິດແລກປ່ຽນເງິນຕາ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງມານຳສະເໜີ.

**ແນວທາງຂອງພັກຕໍ່ກັບວຽກງານການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດ**

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນເງິນຕາປະຈຳປີ 2022

ບັນລຸຕາມຄາດໝາຍທີ່ວາງໄວ້, ກອງປະຊຸມສະເໜີໃຫ້ລັດຖະ ບານ ເອົາໃຈໃສ່ຈັດຕັ້ງປະຕິບັດບາງມາດຕະການດັ່ງນີ້:

1) ກຳນົດນະໂຍບາຍ ແລະ ມາດຕະການກະຕຸ້ນເສດຖະກິດທີ່ຈະແຈ້ງ ເພື່ອສົ່ງເສີມຂະແໜງການຜະລິດ ແລະ ບໍລິການທີ່ມີທ່າແຮງໄດ້ປຽບແທ້ ແລະ ມີຕະຫຼາດຮອງຮັບຢູ່ຕະຫຼາດພາຍໃນ ແລະ ຕ່າງປະເທດທີ່ແນ່ນອນ, ລົງທຶນໄລຍະສັ້ນໄດ້ຮັບຜົນໄວ, ຕິດພັນກັບການນຳໃຊ້ເສັ້ນທາງລົດໄຟເລີ່ມແຕ່ປີ 2022 ໃຫ້ເກີດປະໂຫຍດສູງສຸດ;

2) ກຳນົດແຜນການນຳໃຊ້ບໍລິມາດເງິນ M2 ທີ່ເພີ່ມຂຶ້ນໃນລະດັບສູງນັ້ນໃຫ້ສາມາດຕອບສະໜອງຄວາມຕ້ອງການແຜນພັດທະນາຂອງຂະແໜງການ ແລະ ເປົ້າໝາຍການນຳໃຊ້ອື່ນໆໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຮັບປະກັນການກະຕຸ້ນການເຕີບໂຕເສດຖະກິດ ໄປຄຽງຄູ່ກັບການຮັບປະກັນສະຖຽນລະພາບເສດຖະກິດມະຫາພາກໃຫ້ມີຄວາມໝັ້ນທ່ຽງເປັນຕົ້ນແມ່ນອັດຕາເງິນເຟີ້ ໃຫ້ຢູ່ໃນລະດັບຕາມແຜນທີ່ກຳນົດ;

1) ທະນາຄານແຫ່ງ ສປປ ລາວ ສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ສະເໜີມາດຕະການແກ້ໄຂບັນຫາເງິນເຟີ້ໃຫ້ສອດຄ່ອງກັບສະພາບເສດຖະກິດຕົວຈິງ ເປັນຕົ້ນແມ່ນ ລາຄານ້ຳມັນ, ລາຄາໄຟຟ້າ, ອັດຕາແລກປ່ຽນ ແລະ ຄວບຄຸມລາຄາສິນຄ້າພາຍໃນ ແລະ ສິນຄ້ານຳເຂົ້າທີ່ມີຄວາມຈຳເປັນສຳລັບຊີວິດປະຈຳວັນ ເພື່ອບໍ່ໃຫ້ກະທົບຕໍ່ຄ່າຄອງຊີບຂອງປະຊາຊົນຫຼາຍ;

2) ທະນາຄານແຫ່ງ ສປປ ລາວ ຄົ້ນຄວ້ານະໂຍບາຍກຳນົດອັດຕາດອກເບ້ຍສິນເຊື່ອທີ່ສົ່ງເສີມ, ພ້ອມທັງ ການຊ່ວຍເຫຼືອທາງດ້ານວິຊາການ ເພື່ອກະຕຸ້ນພາກທຸລະກິດ ເປັນຕົ້ນແມ່ນທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ, ກຸ່ມຜູ້ຜະລິດ, ສະຫະກອນ, ທຸລະກິດເກີດຂຶ້ນໃໝ່ໃຫ້ຂະຫຍາຍຕົວ, ມີປະສິດທິຜົນ ແລະ ຫຼຸດຜ່ອນໜີ້ບໍ່ເກີດດອກອອກຜົນ;

3) ທະນາຄານແຫ່ງສປປລາວ ເອົາໃຈໃສ່ຄົ້ນຄວ້າສ້າງແຜນຄຸ້ມຄອງກະແສເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ຕິດພັນກັບການລົງທຶນ, ການຄ້າ ແລະ ລາຍຮັບລະຫວ່າງປະເທດ ເພື່ອສ້າງຄັງສຳຮອງເງິນຕາຕ່າງປະເທດໃຫ້ເຂັ້ມແຂງ (ສະພາແຫ່ງຊາດ, 2021).

**ຫຼັກການທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ**

ການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1) ສອດຄ່ອງກັບແນວທາງ, ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ;

2) ລວມສູນເປັນເອກະພາບ ແລະ ມີການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ;

3) ມີວິທະຍາສາດ, ເດັດຂາດ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

4) ຮັບປະກັນຄວາມເປັນເອກະລາດ ແລະ ສະຖຽນລະພາບທາງດ້ານເງິນຕາ;

5) ທຸກພາກສ່ວນໃນສັງຄົມ ມີພັນທະປະກອບສ່ວນໃນການຈັດຕັ້ງປະຕິບັດ ໃຫ້ການຮ່ວມມື ແລະ ມີສ່ວນຮ່ວມໃນການຄຸ້ມຄອງເງິນຕາຕ່າງປະເທດ (ສະພາແຫ່ງຊາດ, 2022).

**ຫຼັກການທີ່ກ່ຽວກັບການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ**

ການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1) ປະຕິບັດດ້ວຍຄວາມເຄົາລົບ ແລະ ຍຸຕິທຳ;

2) ຮັບປະກັນການໃຫ້ບໍລິການທາງດ້ານການເງິນໃຫ້ມີຄຸນນະພາບ ແລະ ໂປ່ງໃສ;

3) ສົ່ງເສີມໃຫ້ຜູ້ຊົມໃຊ້ ມີຄວາມເຂົ້າໃຈກ່ຽວກັບການບໍລິການທາງດ້ານການເງິນ;

4) ທຸກການສະແຫວງຫາຜົນປະໂຫຍດ ຈາກຊັບສິນທາງປັນຍາ ຕ້ອງໄດ້ຮັບອະນຸຍາດ ຈາກເຈົ້າຂອງສິດ;

5) ຮັບປະກັນຄວາມປອດໄພ ແລະ ຄວາມໝັ້ນຄົງທາງດ້ານການເງິນ (ທະນາຄານແຫ່ງ ສປປ ລາວ, 2020).

**ວິທີການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດຢູ່ ສປປ ລາວ**

ໃນການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດຢູ່ ສປປ ລາວ ແມ່ນອີງຕາມສະພາບຈຸດພິເສດ ແລະ ສະພາບບັນຫາທີ່ເກີດຂຶ້ນຕົວຈິງຂອງ ສປປ ລາວ ໂດຍໃຊ້ເຄື່ອງມືທັງທີ່ເປັນເຄື່ອງມືທາງກົດໝາຍ ແລະ ເຄື່ອງມືທາງເສດຖະສາດ ໂດຍກຳສ້າງນິຕິກຳ ແລະ ກຳນົດນະໂຍບາຍໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຊຶ່ງໜ່ວຍງານທີ່ຮັບຜິດຊອບວຽກງານດັ່ງກ່າວແມ່ນກົມຄຸ້ມຄອງເງິນຕາຕ່າງປະເທດ ທະນາຄານແຫ່ງ ສປປ ລາວ ມີຄືດັ່ງນີ້:

1) ຕິດຕາມກະແສເງິນຕາເຂົ້າຜ່ານລະບົບ;

2) ຄຸ້ມຄອງການໄຫຼອອກຂອງເງິນຕາຕ່າງປະເທດ;

3) ສັງຄົມຊຳລະເປັນເງິນກີບ ແລະ ແລກປ່ຽນຜ່ານລະບົບທະນາຄານ;

4) ດຸ່ນດ່ຽງຄວາມຕ້ອງການ ແລະ ສະໜອງເງິນຕາຕ່າງ ປະເທດ;

5) ຄັງສຳຮອງເຂັ້ມແຂງ.

ນອກຈາກນັ້ນຍັງມີຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ ລົງວັນທີ 14 ກໍລະກົດ 2023 ຊຶ່ງຕ້ອງຈັດຕັ້ງປະຕິບັດດັ່ງນີ້:

1) ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້:

- ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຕິດຕາມ, ປະເມີນຄວາມຄືບໜ້າໃນການຈັດຕັ້ງປະຕິບັດຄຳສັ່ງຕາມພາລະບົດບາດຂອງຕົນ ແລະ ສະຫຼຸບລາຍງານລັດຖະບານຢ່າງເປັນປະຈຳ;
- ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອແບ່ງຂັ້ນຄວາມຮັບຜິດຊອບໃນ ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ, ມາດຕະການຕໍ່ຜູ້ລະເມີດ ໂດຍສະເພາະມາດຕາ 55 ມາດຕະການປັບໃໝ ແລະ ມາດຕາ 56 ມາດຕະການທາງບໍລິຫານອື່ນ ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ;

2) ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການຕິດຕາມ, ກວດກາ, ການຄອບຄອງເງິນຕາຕ່າງປະເທດ, ການແລກປ່ຽນນຳບຸກຄົນ ຫຼື ນິຕິບຸກຄົນ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ລວມທັງ ການໃຫ້ບໍລິການແລກປ່ຽນເງິນຕາໂດຍບໍ່ໄດ້ຮັບອະນຸຍາດ, ການນຳເງິນສົດເຂົ້າ-ອອກ ສປປ ລາວ ພ້ອມທັງ ປະຕິບັດມາດຕະການຕໍ່ຜູ້ລະເມີດຕາມພາລະບົດບາດຂອງຕົນ ແລະ ແລກປ່ຽນຂໍ້ມູນກັບທະນາຄານແຫ່ງ ສປປ ລາວ ຢ່າງເປັນປະຈຳ;

3) ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ອອກນິຕິກຳແນະນຳໃນການຈັດຕັ້ງປະຕິບັດຕົວຈິງໃຫ້ລະອຽດຕື່ມ ພ້ອມທັງໂຄສະນາເຜີຍແຜ່ເຊື່ອມຊຶມ ແລະ ຊີ້ນຳໃຫ້ຂະແໜງການ, ທ້ອງຖິ່ນ, ນັກລົງທຶນ, ນັກທຸລະກິດ, ຜູ້ປະກອບການ ລວມທັງປະຊາຊົນບັນດາເຜົ່າໃຫ້ມີຄວາມເຂົ້າໃຈ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ແລ້ວສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ລັດຖະບານຊາບຢ່າງເປັນປົກກະຕິ;

4) ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້

ໃຫ້ໄດ້ຮັບຜົນດີ. (ນາຍົກລັດຖະມົນຕີແຫ່ງ ສປປ ລາວ, 2023).

### ມາດຕະການທີ່ໃຊ້ໃນການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ກົດໝາຍ ແລະ ລະບຽບການອື່ນ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດທີ່ສ້າງຄວາມເສຍຫາຍແກ່ລັດ ແລະ ສັງຄົມຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ມາດຕະການທາງບໍລິຫານອື່ນ, ໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ/ຫຼື ຮັບຜິດຊອບທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ. ສຳລັບການລົງວິໄນ ແລະ ໃຊ້ແທນຄ່າເສຍຫາຍທາງແພ່ງປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ. ມາດຕະການຕ່າງໆທີ່ໃຊ້ໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງເງິນຕາຕ່າງປະເທດຢູ່ ສປປ ລາວ ມີດັ່ງນີ້:

#### ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດມີລັກສະນະເບົາ ແລະ ເປັນຄັ້ງທຳອິດຈະຖືກສຶກສາອົບຮົມ, ກ່າວເຕືອນ ຈາກອົງການທີ່ກ່ຽວຂ້ອງ ພ້ອມທັງບັນທຶກເປັນລາຍລັກອັກສອນ, ສຳລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ນອກຈາກຈະຖືກສຶກສາອົບຮົມຈາກອົງການທີ່ກ່ຽວຂ້ອງ ແລ້ວຍັງຈະຖືກສຶກສາອົບຮົມຈາກການຈັດຕັ້ງທີ່ຕົນສັງກັດຢູ່ຕື່ມອີກ (ສະພາແຫ່ງຊາດ, 2022).

#### ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງທີ່ລະເມີດ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ຖືກປະຕິບັດມາດຕະການສຶກສາອົບຮົມຕາມມາດຕາ 54 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດແຕ່ຍັງສືບຕໍ່ກະທຳຜິດຊ້ຳຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1) ປັບໃໝ ແຕ່ 10,000,000 (ສິບລ້ານ) ກີບ ຫາ 20,000,000 (ຊາວລ້ານ) ກີບ ສຳລັບ:

ກ. ເຄື່ອນໄຫວທຸລະກຳເງິນຕາຕ່າງປະເທດ ທີ່ເປັນການລະເມີດມາດຕາ 43 ໃນຂໍ້ 1, 6, 7, 8, 9, 10, 11, 13, 14 ແລະ 15 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດມີມູນຄ່າທຽບເທົ່າຕ່ຳກວ່າ 10,000,000 (ສິບລ້ານ) ກີບ;

ຂ. ກຳນົດມູນຄ່າ, ຕິດປະກາດ ແລະ/ຫຼື ໂຄສະນາ ລາຄາສິນຄ້າ, ຄ່າບໍລິການ, ເງິນເດືອນ ຫຼື ຄ່າແຮງງານ ແລະ ຄ່າອື່ນ, ກຳນົດໂຄງສ້າງລາຄາສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ເປັນເງິນຕາຕ່າງປະເທດ;

ຄ. ໂຄສະນາ ແລະ/ຫຼື ປະກາດການບໍລິການແລກປ່ຽນເງິນຕາຕ່າງປະເທດ, ການຈັດຝຶກອົບຮົມ, ເຮັດການຕະຫຼາດກ່ຽວກັບເງິນຕາຕ່າງປະເທດ ທຸກຮູບແບບໂດຍຜ່ານຊ່ອງທາງຕ່າງໆ ທີ່ບໍ່ສອດຄ່ອງກັບກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ລະບຽບການທີ່ກ່ຽວຂ້ອງກັບທຸລະກຳເງິນຕາຕ່າງປະເທດ;

ງ. ກຳນົດ ແລະ ຕິດປະກາດອັດຕາແລກປ່ຽນ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

ຈ. ປະຕິເສດການໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງໃນຄຸ້ມຄອງເງິນຕາ ຕ່າງປະເທດ.

2) ປັບໃໝ 10% (ສິບສ່ວນຮ້ອຍ) ຂອງມູນຄ່າທີ່ລະເມີດ ສຳລັບການເຄື່ອນໄຫວທຸລະກຳເງິນຕາຕ່າງປະເທດ ທີ່ເປັນການລະເມີດມາດຕາ 43 ໃນຂໍ້ 1, 6, 7, 8, 9, 10, 11, 13, 14 ແລະ 15 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດທີ່ມີມູນຄ່າທຽບເທົ່າແຕ່ 10,000,000 (ສິບລ້ານ) ກີບ ຂຶ້ນໄປ.

ສຳລັບການລະເມີດຊ້ຳໃນແຕ່ລະກໍລະນີ ຈະຖືກປັບໃໝສອງເທົ່າຂອງມູນຄ່າປັບໃໝໃນຄັ້ງຫຼ້າສຸດ (ສະພາແຫ່ງຊາດ, 2022, ມາດຕາ 55).

#### ມາດຕະການທາງບໍລິຫານອື່ນ

ວິສາຫະກິດທີ່ຖືກປະຕິບັດ ມາດຕະການສຶກສາອົບຮົມ ແລະ ມາດຕະການປັບໃໝ ຕາມມາດຕາ 54 ແລະ 55 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດແລ້ວ ແຕ່ຍັງມີການລະເມີດລະບຽບການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ຈະຖືກປະຕິບັດມາດຕະການທາງບໍລິຫານອື່ນ ດັ່ງນີ້:

1) ໂຈະການອະນຸຍາດສົ່ງອອກສິນຄ້າ ແລະ ການບໍລິການໃນກໍລະນີທີ່ດຳເນີນທຸລະກຳຊຳລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ໂດຍບໍ່ຜ່ານບັນຊີເງິນຝາກສະເພາະ, ບໍ່ໂອນລາຍຮັບຈາກການສົ່ງອອກເຂົ້າມາ ສປປ ລາວ ຕາມກຳນົດເວລາ ຫຼື ບໍ່ຂາຍເງິນຕາຕ່າງປະເທດທີ່ໄດ້ຮັບຈາກການສົ່ງອອກໃຫ້ທະນາຄານທຸລະກິດຕາມລະບຽບການ;

2) ໂຈະການອະນຸຍາດນຳເຂົ້າສິນຄ້າ ແລະ ການບໍລິການ ໃນກໍລະນີທີ່ດຳເນີນທຸລະກຳຊຳລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ໂດຍບໍ່ຜ່ານບັນຊີເງິນຝາກສະເພາະ;

3) ບໍ່ໄດ້ຮັບການພິຈາລະນາຢັ້ງຢືນການນຳທຶນເຂົ້າ ສປປ ລາວ ໃນກໍລະນີທີ່ສະເໜີຂໍຢັ້ງຢືນການນຳທຶນ ເຂົ້າຊ້າກວ່າເວລາທີ່ທະນາຄານແຫ່ງ ສປປ ລາວ ກຳນົດ, ບໍ່ສະເໜີຂໍຢັ້ງຢືນ ຫຼື ບໍ່ລາຍງານການນຳເຂົ້າທຶນຄັ້ງຜ່ານມາ ໂດຍບໍ່ມີເຫດຜົນພຽງພໍ;

4) ໂຈະການໂອນເງິນອອກ ສປປ ລາວ ຫຼື ໂຈະການເຄື່ອນໄຫວທຸລະກຳທາງການເງິນຜ່ານລະບົບ ທະນາຄານ ໃນກໍລະນີທີ່ກູ້ຢືມເງິນຈາກຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ລາຍງານການເຄື່ອນໄຫວເງິນກູ້ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ;

5) ໂຈະການດຳເນີນທຸລະກິດ ຕາມລະບຽບການທີ່ກ່ຽວຂ້ອງ (ສະພາແຫ່ງຊາດ, 2022).

**ມາດຕະການທາງອາຍາ**

ບຸກຄົນ ແລະ ນິຕິບຸກຄົນ ລວມທັງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ທີ່ລະເມີດກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດຊຶ່ງມີອົງປະກອບຂອງການກະທຳຜິດທາງອາຍາ ແລະ ສ້າງຄວາມເສຍຫາຍແກ່ລະບົບເສດຖະກິດ, ການເງິນ ແລະ ເງິນຕາຂອງ ສປປ ລາວ ຈະຖືກລົງໂທດຕາມປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ກຳນົດໂທດທາງອາຍາ. ນອກຈາກນີ້ ຖ້າບຸກຄົນ ແລະ/ຫຼື ນິຕິບຸກຄົນໃດ ທີ່ປັ່ນປ່ວນອັດຕາແລກປ່ຽນ ກໍໃຫ້ຖືເປັນການກະທຳຜິດທາງອາຍາເຊັ່ນກັນ (ສະພາແຫ່ງຊາດ, 2022).

**ການປັ່ນປ່ວນອັດຕາແລກປ່ຽນ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ປັ່ນປ່ວນອັດຕາແລກປ່ຽນດ້ວຍການສ້າງຂ່າວປອມ, ບິດເບືອນຂໍ້ມູນ ຂ່າວສານກ່ຽວກັບບັນດາປັດໄຈທີ່ຈະກະທົບຕໍ່ອັດຕາແລກປ່ຽນ, ກຳນົດອັດຕາແລກປ່ຽນ , ຊື້ຂາຍ ເງິນຕາໂດຍບໍ່ ສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ, ບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສ້າງຄວາມເສຍຫາຍແກ່ລະບົບເສດຖະກິດ, ການເງິນ ແລະ ເງິນຕາຂອງ ສປປ ລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ປັບໃໝ ແຕ່ 50,000,000 (ຫ້າສິບລ້ານ)ກີບຫາ 100,000,000 (ໜຶ່ງຮ້ອຍລ້ານ)ກີບ (ສະພາແຫ່ງຊາດ, 2022).

**ທິດສະດີກ່ຽວກັບການຄຸ້ມຄອງ**

ໃນທຸກໆການເຄື່ອນໄຫວຂອງຄົນໃນສັງຄົມ, ເລີ່ມຈາກບຸກຄົນ, ກຸ່ມຄົນ ແລະ ການຈັດຕັ້ງ; ຈາກ ຂອບເຂດແຄບ, ລະດັບປະເພດໜຶ່ງ ແລະ ລະດັບສາກົນ ລ້ວນແຕ່ຈຳເປັນຕ້ອງມີການຄຸ້ມຄອງ. ການຄຸ້ມຄອງ ເກີດມາຈາກລັກສະນະສັງຄົມ ຂອງການອອກແຮງງານ, ທ່ານ ກາກ ມາກ (Karl Marx) ໄດ້ຂຽນວ່າ: " ບໍ່ວ່າວຽກງານໃດ ຫາກມີຫຼາຍຄົນຮ່ວມງານນຳກັນ ສາຍກ່ຽວພັນລວມ ແລະ ຄວາມເປັນເອກະພາບຂອງຂະບວນວິວັດນັ້ນ ຍ່ອມສະແດງອອກຢູ່ໃນເຈດຈຳນົງ ແຫ່ງການດັດປັບບັນຊາ ແລະ ຢູ່ໃນພາລະບົດບາດ ທີ່ບໍ່ມີການພົວພັນຫຍັງກັບວຽກງານຍ່ອຍ, ແຕ່ເບິ່ງການບັນຊາລວມ ໃນການເຄື່ອນໄຫວທັງໝົດຂອງໂຮງຊ່າງໜຶ່ງໆແລ້ວ ມັນກໍ່ບໍ່ຕ່າງຫຍັງກັບຜູ້ຕີຈັງຫວະດົນຕີນັ້ນແຫຼະ, ນັ້ນແມ່ນໂຮງງານຜະລິດປະເພດໜຶ່ງ ທີ່ຈະຕ້ອງໄດ້ດຳເນີນໄປຢູ່ໃນແບບວິທີການຜະລິດ ທີ່ມີລັກສະນະປະສົມປະສານ. ການຄຸ້ມຄອງແມ່ນ ການອອກລະບຽບການຕ່າງໆ ເພື່ອມາປົກປ້ອງວຽກງານຂອງລັດ. ດັ່ງນັ້ນຈຶ່ງໝາຍເຖິງການເຄົາລົບກົດໝາຍຂອງຝ່າຍປົກຄອງເອງ ແລະ ການບັງຄັບໃຫ້ປະຊາຊົນທົ່ວໄປປະຕິບັດກົດໝາຍ (ສະຖາບັນການເມືອງ-ການປົກຄອງແຫ່ງຊາດ, 2003).

ການຄຸ້ມຄອງ ໃນຄວາມໝາຍລະອຽດ, ແມ່ນການ/ຈັດຕັ້ງບັນຊາເປົ້າຫມາຍອັນຫນຶ່ງໃຫ້ເຄື່ອນໄຫວໄປຕາມຈຸດໝາຍຂອງການຄຸ້ມຄອງ ໂດຍຜ່ານການປະຕິບັດ ແລະ ເຄົາລົບລະບຽບການຕ່າງໆ.

ການຄຸ້ມຄອງ ແມ່ນການພົວພັນພາວະວິໄສ ລະຫວ່າງອັດຕະພາບຄຸ້ມຄອງກັບພາວະພາບຄຸ້ມຄອງ. ແຕ່ລະອານຸລະບົບກໍລ້ວນແຕ່ເປັນລະບົບໜຶ່ງທີ່ສັບສົນ ເພາະວ່າການເຄື່ອນໄຫວຂອງແຕ່ລະອະນຸລະບົບ ບາງຢ່າງກໍບໍ່ໄປຕາມທິດທີອັດຕະພາບຄຸ້ມຄອງໄດ້ກຳນົດໄວ້. ເພາະສະນັ້ນ, ມັນຈຶ່ງຮຽກຮ້ອງໃຫ້ອັດຕະພາບ ຄຸ້ມຄອງ ຕ້ອງເພີ່ມທະວີວຽກງານຄຸ້ມຄອງໃຫ້ມີປະ ສິດທິພາບສູງຂຶ້ນກວ່າເກົ່າ (ສະຖາບັນການເມືອງ-ການປົກຄອງ, 2003).

ຈຸດໝາຍຂອງການຄຸ້ມຄອງ ແມ່ນຄຸນນະພາບ, ປະສິດທິພາບຂອງວຽກງານ. ສະນັ້ນ, ການຄຸ້ມຄອງ ຈຶ່ງຕິດພັນກັບການສົ່ງເສີມທັງສອງວຽກນີ້ ແມ່ນຄຽງຄູ່ກັນໄປຕະຫລອດ ຫຼື ເວົ້າອີກຢ່າງໜຶ່ງວ່າ: ການ ຄຸ້ມຄອງແມ່ນການກະທົບຕໍ່ເນື່ອງ. ມີການຈັດຕັ້ງ ມີຈຸດປະສົງເປົ້າໝາຍຢ່າງຊັດເຈນ ຂອງຜູ້ຄຸ້ມຄອງຕໍ່ກັບບັນດາເປົ້າໝາຍຂອງການຄຸ້ມຄອງ.

ທາດແທ້ຂອງການຄຸ້ມຄອງ ແມ່ນຕ້ອງກຳນົດຈຸດໝາຍໃຫ້ແທດເໝາະ ມີຄວາມເປັນໄປໄດ້ສູງໃນການພະຍາກອນສະພາບການ ແລະ ທ່າອ່ຽງຜັນແປຂອງເປົ້າໝາຍຄຸ້ມຄອງ, ມີວິທີທາງສັງຄົມກະທົບຕໍ່ເປົ້າໝາຍໃຫ້ມີປະສິດທິຜົນສູງ.

**ທິດສະດີກ່ຽວກັບເງິນຕາ**

ນັກເສດຖະສາດໄດ້ພະຍາຍາມສ້າງທິດສະດີປະລິມານເງິນຂຶ້ນມາເພື່ອອະທິບາຍການພົວພັນລະຫວ່າງປະລິມານເງິນທີ່ໝູນວຽນຢູ່ໃນລະບົບເສດຖະກິດກັບລະດັບລາຄາສິນຄ້າ ຊຶ່ງແນວຄວາມຄິດໄດ້ເກີດຂຶ້ນມາເປັນເວລາດົນນານແລ້ວນັບຕັ້ງແຕ່ສັດຕະວັດທີ 16 ຈົນຮອດປັດຈຸບັນດັ່ງນັ້ນທິດສະດີປະລິມານເງິນຂອງນັກເສດຖະສາດແຕ່ລະສະໄໝຈຶ່ງຄ້າຍກັນ ຫຼື ແຕກຕ່າງກັນໄປຕາມເວລາ ແລະ ສະພາບການ ເຊັ່ນໃນສະໄໝຂອງກຸ່ມຄາສສິກ ເຊື່ອວ່າມີການຈ້າງງານເຕັມທີ່ ດັ່ງນັ້ນ ແນວຄິດຂອງນັກເສດຖະສາດຄາສສິກໃນທິດສະດີປະລິມານເງິນ ຈຶ່ງອະທິບາຍວ່າ "ການປ່ຽນແປງໃນປະລິມານເງິນຈະເຮັດໃຫ້ລາຄາສິນຄ້າປ່ຽນແປງໃນປະລິມານດຽວກັນ" ໃນຂະນະທີ່ທິດສະດີປະລິມານເງິນໃນສະໄໝຂອງເຄນ ຊຶ່ງເຊື່ອວ່າ ມີການຫວ່າງງານໃນລະບົບເສດຖະກິດ ອະທິບາຍເຖິງປະລິມານການຜະລິດ,ລະດັບລາຍໄດ້, ລະດັບການຈ້າງງານ, ລະດັບລາຄາ ແລະ ການພົວພັນລະຫວ່າງປັດໄຈຕ່າງໆ ນັ້ນ ຊຶ່ງແນວຄວາມຄິດດັ່ງກ່າວອາດຈະຖືກຕ້ອງ ແລະ ເໝາະສົມກັບສະພາບການໃນສະໄໝນັ້ນ ດັ່ງນັ້ນຈຶ່ງຕ້ອງສຶກສາທິດສະດີປະລິມານເງິນແຕ່ລະສະໄໝ ເພື່ອເຂົ້າໃຈບັນຫາ ແລະ ແນວຄວາມຄິດທີ່ວິວັດທະນາການຕໍ່ເນື່ອງກັນມາເພື່ອຈະໄດ້ວິເຄາະ ແລະ ປຽບທຽບໄດ້ຊັດເຈນຂຶ້ນ.

**ທິດສະດີການຖືເງິນຂອງກຸ່ມເຄນສ໌**

ຈາກວິກິດການທາງເສດຖະກິດທີ່ເກີດຂຶ້ນຕົ້ນທົດສະວັດ 1930 ເຮັດໃຫ້ເສດຖະກິດທົ່ວໂລກຕ້ອງເຈີກັບພາວະເສດຖະກິດຕົກຕໍ່າຢ່າງຮຸນແຮງ ໂດຍສະເພາະປະເທດອຸດສາຫະກໍາໃນເອີຣົບ ແລະ ອາເມຣິກາ ແຕ່ແນວຄວາມຄິດກ່ຽວກັບທິດສະດີປະລິມານເງິນຂອງກຸ່ມດັ່ງເດີມບໍ່ສາມາດແກ້ໄຂບັນຫາໄດ້ ເຮັດໃຫ້ຄວາມນິຍົມໃນທິດສະດີປະລິມານເງິນ ຊຶ່ງມີມາຕັ້ງແຕ່ສັດຕະວັດທີ 20 ຕ້ອງສະຫຼາຍຕົວໄປໃນທົດສະວັດ 1930 ດັ່ງທີ່ໄດ້ກ່າວມາແລ້ວ ໃນຂະນະດຽວກັນຈອນ ເມນາດ ເຄນ (JOHN MAYNARD KEYES) ນັກເສດຖະສາດຄົນສໍາຄັນຂອງອັງກິດ ໄດ້ຄົ້ນພົບທິດສະດີໃໝ່ ແລະ ເຜີຍແຜ່ແນວຄວາມຄິດໄວ້ໃນປຶ້ມ "The General Theory of Employment Interest and Money" ໃນປຶ້ມຫົວນີ້ ທ່ານເຄນໄດ້ສ້າງແນວຄວາມຄິດໃໝ່ໆ ໂດຍເນັ້ນຄວາມສໍາຄັນຂອງການຈ້າງງານ ເພາະວ່າເຄນເຊື່ອວ່າພາວະສົມດຸນບໍ່ຈໍາເປັນຕ້ອງຢູ່ໃນລະດັບການຈ້າງງານເຕັມທີ່ສະເໝີໄປຄືກັບແນວຄິດຂອງກຸ່ມດັ່ງເດີມ ແຕ່ພາວະສົມດຸນສາມາດຈະເກີດຂຶ້ນໄດ້ ເຖິງແມ່ນວ່າຈະມີການຫວ່າງງານນອກຈາກນີ້ ເຄນຍັງເຊື່ອໃນກົນໄກຂອງອັດຕາດອກເບ້ຍອີກດ້ວຍ ດັ່ງນັ້ນທິດສະດີການເງິນຂອງເຄນຈຶ່ງບໍ່ໄດ້ອະທິບາຍເລື່ອງການປ່ຽນແປງມູນຄ່າຂອງເງິນແຕ່ຢ່າງດຽວເທົ່ານັ້ນ ແຕ່ຍັງໄດ້ອະທິບາຍທົ່ວໄປເຖິງລະດັບລາຍໄດ້, ລະດັບການຈ້າງງານ, ປະລິມານການຜະລິດ, ລະດັບລາຄາ ລວມທັງສະແດງການພົວພັນລະຫວ່າງປັດໄຈຕ່າງໆ ເຫຼົ່ານີ້ອີກດ້ວຍ (ອ້າງໃນ ລັດຕະນາ ສາຍຄະນິດ, 2544).

ເຄນສ໌ໄດ້ອະທິບາຍກ່ຽວກັບຄວາມຕ້ອງການຖືເງິນ ຫຼື ອຸປະສົງຕໍ່ເງິນໄວ້ໃນທິດສະດີຄວາມຕ້ອງການຖືເງິນ ໂດຍມີຄວາມຄິດເຫັນວ່າບຸກຄົນທົ່ວໄປຕ້ອງການທີ່ຈະຖືເງິນໄວ້ເພື່ອຈຸດປະສົງ 3 ຢ່າງຄື:

- ຄວາມຕ້ອງການຖືເງິນໄວ້ເພື່ອໃຊ້ຈ່າຍໃນຊີວິດປະຈໍາວັນ

ໂດຍທົ່ວໄປຄົນ ຈະຕ້ອງຖືເງິນໄວ້ເພື່ອໃຊ້ຈ່າຍຊື້ສິນຄ້າ ແລະ ບໍລິການໃນແຕ່ລະວັນຈໍານວນໜຶ່ງ ຄວາມຕ້ອງການຖືເງິນເພື່ອໃຊ້ຈ່າຍນີ້ຈະມີຈໍານວນເທົ່າໃດຈະຂຶ້ນກັບລາຍໄດ້ ແລະ ໄລຍະເວລາທີ່ຈະໄດ້ຮັບລາຍໄດ້ໃນຄັ້ງຕໍ່ໄປ ຖ້າຜູ້ທີ່ມີລາຍໄດ້ຫຼາຍກໍຈະຕ້ອງການຖືເງິນໄວ້ໃຊ້ຈ່າຍຫຼາຍກວ່າຜູ້ມີລາຍໄດ້ໜ້ອຍ ແລະ ຖ້າໄລຍະເວລາທີ່ຈະໄດ້ຮັບລາຍໄດ້ໃນຄັ້ງຕໍ່ໄປດົນ ຄວາມຕ້ອງການຖືເງິນກໍຈະຫຼາຍເຊັ່ນກັນ.

ຄວາມຕ້ອງການຖືເງິນໄວ້ເພື່ອໃຊ້ຈ່າຍໃນເວລາຈໍາເປັນຄົນເຮົາຈະຖືເງິນສົດໄວ້ສໍາລັບໃຊ້ຈ່າຍໃນເວລາຈໍາເປັນ ຊຶ່ງອາດຈະເກີດຂຶ້ນເວລາໃດກໍໄດ້ ເຊັ່ນ: ເວລາເຈັບເປັນ ຫຼື ເກີດອຸປະຕິເຫດເປັນຕົ້ນ ການຖືເງິນປະເພດນີ້ຂຶ້ນກັບລາຍໄດ້ ຖ້າລາຍໄດ້ຫຼາຍການຖືເງິນປະເພດນີ້ກໍຫຼາຍເຊັ່ນກັນ ແຕ່ຖ້າລາຍໄດ້ໜ້ອຍການຖືເງິນກໍໜ້ອຍໄປນໍາ

ຄວາມຕ້ອງການຖືເງິນເພື່ອຫາກໍາໄລ: ຄົນເຮົາຕ້ອງການເກັບເງິນໄວ້ເພື່ອລົງທຶນຫາກໍາໄລ ເຊັ່ນ: ການຊື້ຫຼັກຊັບຕ່າງໆ ຄວາມຕ້ອງການຖືເງິນໄວ້ເພື່ອຫາກໍາໄລຈະມີຫຼາຍ ຫຼື ໜ້ອຍຂຶ້ນກັບອັດຕາດອກເບ້ຍ ໂດຍມີການພົວພັນກັນໃນທາງກົງກັນຂ້າມ ເນື່ອງຈາກສິ່ງທໍາອິດຄົນເຮົາຄິດວ່າ ອັດຕາດອກເບ້ຍ ແມ່ນຄ່າເສຍໂອກາດໃນການຖືເງິນ ຊຶ່ງບໍ່ມີລາຍໄດ້ໃນຮູບແບບຂອງດອກເບ້ຍ ໝາຍຄວາມວ່າ ໃນເວລາທີ່ອັດຕາດອກເບ້ຍສູງ ຄ່າເສຍໂອກາດໃນການຖືເງິນກໍຈະສູງຂຶ້ນໄປນໍາ ເຮັດໃຫ້ບຸກຄົນຫຼຸດຈໍານວນເງິນທີ່ພວກເຂົາຖືຢູ່ ແລ້ວນໍາເອົາເງິນໄປລົງທຶນເພື່ອຫາກໍາໄລ ໃນທາງກົງກັນຂ້າມ ຖ້າອັດຕາດອກເບ້ຍຫຼຸດລົງ ຄ່າເສຍໂອກາດໃນການຖືເງິນກໍຈະຫຼຸດລົງໄປນໍາ ເຮັດໃຫ້ບຸກຄົນຍອມທີ່ຈະຖືເງິນຫຼາຍກວ່າເອົາໄປລົງທຶນ, ຕໍ່ມາເຄນສ໌ໄດ້ອະທິບາຍວ່າຄົນເຮົາແຕ່ລະຄົນຕ່າງກໍມີອັດຕາດອກເບ້ຍທີ່ຄາດຫວັງ ຫຼື ອັດຕາ

ດອກເບ້ຍປົກກະຕິ ທີ່ເຊື່ອວ່າຈະເກີດຂຶ້ນໃນອະນາຄົດ ອັດຕາດອກເບ້ຍນີ້ສາມາດຮູ້ໄດ້ຈາກປະສົບການ ແລະ ຄວາມຮູ້ສຶກເຊັ່ນ ໃນລະດັບອັດຕາດອກເບ້ຍສູງຄາດວ່າອັດຕາດອກເບ້ຍຈະຕໍ່າລົງຈາກລະດັບເກົ່າໃນອະນາຄົດ ເຮັດໃຫ້ພວກເຂົາຖືຫຼັກຊັບໄວ້ຫຼາຍກວ່າເງິນສົດ ເພື່ອວ່າ ເມື່ອອັດຕາດອກເບ້ຍຕໍ່າລົງໃນອະນາຄົດທີ່ພວກເຂົາຄິດລາຄາຫຼັກຊັບຈະສູງຂຶ້ນ ທີ່ຈະເຮັດໃຫ້ພວກເຂົາໄດ້ກໍາໄລ ໃນທາງກົງກັນຂ້າມໃນລະດັບອັດຕາດອກເບ້ຍຕໍ່າ ບຸກຄົນຄາດວ່າອັດຕາດອກເບ້ຍອາດຈະສູງຂຶ້ນ ດັ່ງນັ້ນພວກເຂົາຈະຖືເງິນສົດໄວ້ຫຼາຍກວ່າຫຼັກຊັບ ເພື່ອວ່າຈະບໍ່ຂາດທຶນເມື່ອລາຄາຫຼັກຊັບຕໍ່າລົງເນື່ອງຈາກອັດຕາດອກເບ້ຍສູງຂຶ້ນຕາມການຄາດການ (J.A. Schumpeter, "Ten Great Economists from Marx to Keynes", 1952).

**ບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງ**

ສຸພັກສອນ ອິນທະວົງ ວິທະຍານິພົນ ການຄຸ້ມຄອງເງິນຕາຕ່າງປະເທດ ກໍລະນີສຶກສາ: ການຍັ້ງຢືນທຶນຂອງຜູ້ລົງທຶນຕ່າງປະເທດ ຢູ່ ສປປ ລາວ. ຜົນການສຶກສາພົບວ່າ ນິຕິກໍາ ແລະ ຫຼັກການທີ່ກ່ຽວຂ້ອງກັບການຄຸ້ມຄອງເງິນຕາຕ່າງປະເທດໃນການຍັ້ງຢືນທຶນຂອງຜູ້ລົງທຶນຕ່າງປະເທດ ຢູ່ ສປປ ລາວ ມີພຽງພໍ ແລະ ຄົບຖ້ວນໃນລະດັບປານກາງ ຄິດເປັນ 29.8 ສ່ວນຮ້ອຍ; ຂັ້ນຕອນການຍັ້ງຢືນທຶນຂອງຜູ້ລົງທຶນຕ່າງປະເທດຢູ່ ສປປ ລາວມີຄວາມຈໍາເປັນໃນລະດັບຫຼາຍ ຄິດເປັນ 40.5 ສ່ວນຮ້ອຍ; ບັນຫາຂອງການຍັ້ງຢືນທຶນຂອງຜູ້ລົງທຶນຕ່າງປະເທດມີໃນລະດັບປານກາງ ຄິດເປັນ 37.2 ສ່ວນຮ້ອຍ ນອກຈາກນີ້ຍັງມີບັນຫາອື່ນໆທີ່ພົບເຫັນ ເຊັ່ນ: ນັກລົງທຶນຈໍານວນໜຶ່ງຍັງຖືເບົາຕໍ່ການນໍາເອົາທຶນມາຈົດທະບຽນ ແລະ ບໍ່ໄດ້ເຂົ້າມາຍັ້ງຢືນການນໍາເຂົ້າທຶນນໍາທະນາຄານແຫ່ງ ສປປ ລາວ ຕາມລະບຽບການ ນອກຈາກນັ້ນຍັງມີນັກລົງທຶນຈໍານວນໜຶ່ງໜຶ່ງທີ່ນໍາເງິນສົດເຂົ້າມາ ໂດຍບໍ່ໄດ້ແຈ້ງຕໍ່ເຈົ້າໜ້າທີ່ດ່ານພາສີ ເຮັດໃຫ້ບໍ່ສາມາດເກັບກໍາຂໍ້ມູນເອກະສານໃບຍັ້ງຢືນການນໍາທຶນເຂົ້າມາໄດ້ ແລະ ຂະແໜງການທີ່ກ່ຽວຂ້ອງຍັງຂາດການປະສານສານຢ່າງຕໍ່ເນື່ອງໃນການຍັ້ງຢືນທຶນຂອງຜູ້ລົງທຶນຕ່າງປະເທດຢູ່ ສປປ ລາວ (ມະຫາວິທະຍາໄລແຫ່ງຊາດລາວ, 2021).

ສຸລິວັນ ຂັນເພັດ ວິທະຍານິພົນ ການຄຸ້ມຄອງທຸລະກິດການທະນາຄານ ສຶກສາຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ. ຜົນການສຶກສາພົບວ່າ ນິຕິກໍາທີ່ກ່ຽວຂ້ອງກັບການຄຸ້ມຄອງທຸລະກິດການທະນາຄານຕ້ອງໄດ້ຮັບການປັບປຸງຢູ່ໃນລະດັບປານກາງຄິດເປັນຄ່າສະເລ່ຍເທົ່າກັບ 3.08 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.347; ບັນຫາຕ່າງໆ ແມ່ນເກີດຈາກອົງການຄຸ້ມຄອງທຸລະກິດການທະນາຄານເອງ ໂດຍສະເພາະພະນັກງານວິຊາການທີ່ເຮັດວຽກຄຸ້ມຄອງທຸລະກິດການທະນາຄານຍັງຂາດປະສົບການ ແລະ ຄວາມຮູ້ ນອກຈາກນັ້ນການປະສານງານລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານການຄ້າຕ່າງປະເທດລາວມະຫາຊົນຍັງມີຂອບເຂດຈໍາກັດ. ການຈັດຕັ້ງປະຕິບັດວຽກງານບໍ່ເປັນໄປຕາມກອບທີ່ວາງໄວ້ ຊຶ່ງມີຄ່າສະເລ່ຍເທົ່າກັບ 4.14 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.298 ແລະ ຍັງເຫັນວ່າທະນາຄານແຫ່ງ ສປປ ລາວ ໄດ້ຕິດຕາມກວດກາທະນາຄານການຄ້າຕ່າງປະເທດລາວມະຫາຊົນຍັງບໍ່ທົ່ວເຖິງຢູ່ໃນລະດັບຫຼາຍທີ່ສຸດເນື່ອງຈາກທະນາຄານການຄ້າລາວມະຫາຊົນມີການຂະຫຍາຍຕົວຢ່າງວ່ອງໄວໂດຍ ເຫັນໄດ້ໃນປັດຈຸບັນມີຫຼາຍສາຂາ ແລະ ມີໜ່ວຍບໍລິການທີ່ເປີດໃໝ່ຢ່າງຫຼວງຫຼາຍ ຊຶ່ງມີຄ່າສະເລ່ຍເທົ່າກັບ 4.71 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.509 (ມະຫາວິທະຍາ ໄລປທ່າງຊາດລາວ, 2019).

ວິໄລວັນ ພູທິສອນ ວິທະຍານິພົນ ສຶກສາປັດໄຈທີ່ມີຜົນຕໍ່ການນໍາໃຊ້ເງິນຕາຫຼາຍສະກຸນຂອງ ສປປ ລາວ. ຜົນການສຶກສາພົບວ່າ ຜົນການວິເຄາະຈາກແບບຈໍາລອງການນໍາໃຊ້ເງິນຕາຫຼາຍສະກຸນ ສະແດງໃຫ້ເຫັນວ່າມີການພົວພັນໄລຍະຍາວຂອງຕົວປ່ຽນອິດສະຫຼະອັດຕາແລກປ່ຽນກີບຕໍ່ໂດລາສະຫະລັດ ແລະ ອັດຕາເງິນເຟີ້ແມ່ນມີການພົວພັນກັນໃນທາງດຽວກັນກັບການນໍາໃຊ້ເງິນຕາຫຼາຍສະກຸນໃນໄລຍະຍາວ ແລະ ເຄື່ອນທີ່ໄປພ້ອມກັນໃນໄລຍະຍາວ ແລະ ມີຄວາມສໍາຄັນທາງສະຖິຕິ ສ່ວນຜົນການທົດສອບການພົວພັນໄລຍະສັ້ນຕົວປ່ຽນອິດສະຫຼະຂອງດຸນການຄ້າ, ອັດຕາແລກປ່ຽນກີບຕໍ່ໂດລາ, ອັດຕາເງິນເຟີ້, ທຶນຊ່ວຍເຫຼືອລ້າ ແລະ ຕົວປ່ຽນຕາມ ການນໍາໃຊ້ເງິນຕາຫຼາຍສະກຸນແມ່ນມີການພົວພັນໃນທາງບວກ ແລະ ມີການປັບຕົວໃນໄລຍະສັ້ນໄປສູ່ຈຸດສົມດຸນໃນໄລຍະຍາວ ແລະ ມີຄວາມສໍາຄັນທາງສະຖິຕິ (ມະຫາວິທະຍາໄລແຫ່ງຊາດ, 2020).

Duma ໄດ້ສຶກສາກ່ຽວກັບສະພາບການນໍາໃຊ້ເງິນຕາຕ່າງປະເທດໃນກໍາປູເຈ້ຍ. ຜົນການສຶກສາພົບວ່າ: ການນໍາໃຊ້ເງິນຕາຕ່າງປະເທດໃນກໍາປູເຈຍຈະເພີ່ມຂຶ້ນພາຍໃຕ້ປາກົດການເພີ່ມຂຶ້ນຂອງເສດຖະກິດມະຫາພາກທີ່ມີສະຖຽນລະພາບ ແລະ ສະພາບແວດລ້ອມທາງການເມືອງ. ປັດໄຈດ້ານອັດຕາແລກປ່ຽນບໍ່ແມ່ນປັດໄຈທີ່ມີຜົນຕໍ່ການເພີ່ມການນໍາໃຊ້ເງິນຕາຕ່າງປະເທດ. ໂດຍອີງໃສ່ການນໍາໃຊ້ເງິນຕາຕ່າງປະເທດ ໂດຍສະເພາະເງິນໂດລາທີ່ເພີ່ມຂຶ້ນໃນຫຼາຍປີຜ່ານມາ,ແມ່ນໄດ້ແກ່ການໄຫຼເຂົ້າຂອງເງິນໂດລາໃນຂະແໜງການຕັດຫຍິບເພື່ອການສົ່ງອອກ, ການໃຊ້ຈ່າຍ

ເພື່ອການທ່ອງທ່ຽວ, ການລົງທຶນໂດຍກົງຈາກຕ່າງປະເທດ, ທຶນຊ່ວຍເຫຼືອລ້າຊຶ່ງເປັນຜົນເຮັດໃຫ້ສະກຸນດັ່ງກ່າວເຂົ້າມາມີບົດບາດໃນລະບົບເສດຖະກິດ ໂດຍຜ່ານການສຶກສາບົນດາບົດຮຽນຕ່າງປະເທດກ່ຽວກັບການຫຼຸດຜ່ອນການນຳໃຊ້ເງິນຕາຕ່າງປະເທດນັ້ນເຫັນວ່າ ການບໍລິຫານເສດຖະກິດຕະຫຼາດຢ່າງລະມັດລະວັງແມ່ນຍຸດທະສາດສຳຄັນທີ່ສະໜັບສະໜູນໃຫ້ແກ່ການສ້າງສະພາບແວດລ້ອມເສດຖະກິດມະຫາພາກ ແລະ ການຫຼຸດຜ່ອນການນຳໃຊ້ເງິນຕາຕ່າງປະເທດຫຼຸດລົງໄດ້ເທື່ອລະກ້າວ (IMF Working Paper, WP/11/49, March 2011).

**ວິທີການຄົ້ນຄວ້າ**

ການສຶກສານີ້ແມ່ນການວິໄຈແບບປະສົມປະສານ (Mixed Methods) ລະຫວ່າງການວິໄຈແບບຄຸນນະພາບ (Qualitative) ແລະ ການວິໄຈແບບປະລິມານ (Quantitative).

ການວິໄຈແບບຄຸນນະພາລ: ໃຊ້ການສຶກສາເອກະສານ (Documentary Research) ຈາກນິຕິກຳ, ນະໂຍບາຍຂອງພັກ-ລັດ ແລະ ການສຳພາດເຈາະເລິກ (In-depth Interview) ກັບຜູ້ມີສ່ວນກ່ຽວຂ້ອງຈຳນວນ 10 ທ່ານ.

ການວິໄຈແບບປະລິມານ: ໃຊ້ແບບສອບຖາມ (Questionnaire) ເກັບກຳຂໍ້ມູນຈາກກຸ່ມຕົວຢ່າງ 80 ຄົນ.

**ປະຊາກອນ ແລະ ກຸ່ມຕົວຢ່າງ**

ປະຊາກອນ: ປະກອບມີພະນັກງານຈາກທະນາຄານແຫ່ງ ສປປ ລາວ (ສູນກາງ ແລະ ສາຂາພາກເໜືອ), ທະນາຄານທຸລະກິດ, ຮ້ານຄ້າ ແລະ ປະຊາຊົນໃນ 3 ແຂວງເປົ້າໝາຍ.

ກຸ່ມຕົວຢ່າງ: ໃຊ້ສູດ Taro Yamane ຄຳນວນຂະໜາດກຸ່ມຕົວຢ່າງໄດ້ 80 ຄົນ ຈາກປະຊາກອນທັງໝົດ 100 ຄົນ, ຄັດເລືອກແບບສະເພາະເຈາະຈົງ (Purposive Sampling).

ເຄື່ອງມືເກັບກຳຂໍ້ມູນ

ແບບສອບຖາມ: ປະກອບດ້ວຍ 5 ພາກສ່ວນ: 1) ຂໍ້ມູນທົ່ວໄປ, 2) ຄວາມເໝາະສົມຂອງນິຕິກຳ, 3) ວິທີການຄຸ້ມຄອງ, 4) ບັນຫາໃນການຄຸ້ມຄອງ, 5) ແນວທາງແກ້ໄຂ.

ການສຳພາດ: ໃຊ້ແບບສຳພາດແບບມີໂຄງສ້າງ ແລະ ເຄື່ອງບັນທຶກສຽງ.

ການວິເຄາະຂໍ້ມູນ ແລະ ແປຜົນ

ຂໍ້ມູນປະລິມານ: ວິເຄາະດ້ວຍໂປແກຣມ SPSS ໂດຍໃຊ້ສະຖິຕິພັນລະນາ (Descriptive Statistics) ເຊັ່ນ: ຄວາມຖີ່ (Frequency), ຮ້ອຍລະ (Percentage), ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (S.D.).

ເກນການແປຜົນ: ໃຊ້ເກນ 5 ລະດັບ (5 = ຫຼາຍທີ່ສຸດ, 4 = ຫຼາຍ, 3 = ປານກາງ, 2 = ໜ້ອຍ, 1 = ໜ້ອຍທີ່ສຸດ).

ຂໍ້ມູນທາງຄຸນນະພາບ: ວິເຄາະດ້ວຍການວິເຄາະເນື້ອຫາ (Content Analysis) ແລະ ນຳສະເໜີແບບພັນລະນາ.

**ຜົນການສຶກສາ ແລະ ອະພິປາຍຜົນ**

ຜູ້ຕອບແບບສອບຖາມຂອງການສຶກສາໃນຄັ້ງນີ້ ຈຳນວນ 80 ທ່ານ ໂດຍສ່ວນໃຫຍ່ແມ່ນເພດຊາຍ ຄິດເປັນ 68.8 ສ່ວນຮ້ອຍ ຊຶ່ງມີອາຍຸລະຫວ່າງ 35-45 ປີ ກວມອັດຕາສ່ວນສູງກ່ວາໝູ່ ຄິດເປັນ 31 ສ່ວນຮ້ອຍ, ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນຜູ້ທີ່ມີລະດັບການສຶກສາປະລິນຍາຕີ ຄິດເປັນ 63.8 ສ່ວນຮ້ອຍ ແລະ ຜູ້ຕອບແບບສອບຖາມສ່ວນໃຫຍ່ ແມ່ນຜູ້ທີ່ມີປະສົບການໃນການເຮັດວຽກລະຫວ່າງ 11-15 ປີ ຄິດເປັນ 46.3 ສ່ວນຮ້ອຍ.

**ຄວາມຄິດເຫັນກ່ຽວກັບນິຕິກຳ ແລະ ຫຼັກການຕ່າງໆ ກ່ຽວກັບມາດຕະການໃນການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ** ເຫັນວ່າ ນິຕິກຳກ່ຽວກັບການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ຄົບຖ້ວນພຽງພໍແລ້ວໃນລະດັບປານກາງ ໂດຍມີຄ່າສະເລ່ຍເທົ່າກັບ 2.61; ນິຕິກຳ ແລະ ຫຼັກການກ່ຽວກັບການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ສາມາດຈັດຕັ້ງປະຕິບັດໄດ້ໃນລະດັບປານກາງຫາຫຼາຍໂດຍມີຄ່າສະເລ່ຍເທົ່າກັບ 2.75; ນິຕິກຳ ແລະ ຫຼັກການກ່ຽວກັບການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງໃນລະດັບປານກາງໂດຍມີຄ່າສະເລ່ຍ ເທົ່າກັບ 2.99. ຊຶ່ງສອດຄ່ອງກັບຄຳສຳພາດທີ່ວ່າ ນິຕິກຳ ຍັງບໍ່ທັນເໝາະສົມ ແລະ ສອດຄ່ອງກັບເງື່ອນໄຂໃນການຈັດຕັ້ງປະຕິບັດຕົວຈິງເທົ່າທີ່ຄວນ ເປັນຕົ້ນແມ່ນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດຈາກຫານສົ່ງອອກສິນຄ້າ ແລະ ບໍລິການ ເນື່ອງຈາກວ່າການນຳເອົານິຕິກຳມາຈັດຕັ້ງປະຕິບັດເຫັນວ່າຍັງຂາດບຸກຄະລາກອນທີ່ມີ

ຄວາມຮູ້ຄວາມເຂົ້າໃຈຢ່າງເລິກເຊິ່ງ ເຮັດໃຫ້ການປະຕິບັດວຽກງານແລະນິຕິກຳດັ່ງກ່າວຍັງມີບັນຫາເພາະເປັນເລື່ອງທີ່ໃໝ່.

**ຄວາມຄິດເຫັນກ່ຽວກັບວິທີການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ** ເຫັນວ່າ ວິທີການໃນການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ມີຄວາມເໝາະສົມໃນລະດັບປານກາງໂດຍມີຄ່າສະເລ່ຍ ເທົ່າກັບ 3.13; ການຄຸ້ມຄອງຜູ້ປະກອບການບໍ່ໃຫ້ຊື້ຂາຍແລກປ່ຽນ ເງິນຕາຕ່າງປະເທດແບບຊະຊາຍໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ມີຄວາມເໝາະສົມລະດັບປານກາງ ໂດຍມີຄ່າສະເລ່ຍ ເທົ່າກັບ 3.11; ການຄຸ້ມຄອງປະຊາຊົນບໍ່ໃຫ້ຊື້ຂາຍແລກປ່ຽນເງິນຕາຕ່າງປະເທດແບບຊະຊາຍໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ມີຄວາມເໝາະສົມໃນລະດັບໜ້ອຍໂດຍມີຄ່າສະເລ່ຍເທົ່າກັບ 2.54. ຊຶ່ງສອດຄ່ອງກັບຄຳສຳພາດທີ່ວ່າ ການຄອບຄອງເງິນຕາຕ່າປະເທດຢູ່ ສປປ ລາວ ແມ່ນຜູ້ທີ່ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ ສາມາດຄອບຄອງເງິນຕາຕ່າງປະເທດທີ່ໄດ້ມາຢ່າງຖືກຕ້ອງຕາມກົດໝາຍ ດ້ວຍການເປີດບັນຊີເງິນຝາກໄວ້ນຳທະນາຄານທຸລະກິດ ຢູ່ ສປປ ລາວ ແລະ ຖືຄອງເປັນເງິນສົດຕາມລະບຽບການ ນອກຈາກນັ້ນກ່ອນຈະໃຊ້ເງິນຕາຕ່າງປະເທດທີ່ຄອບຄອງນັ້ນຕ້ອງແລກປ່ຽນເປັນເງິນກີບ ເພື່ອຊຳລະຄ່າສິນຄ້າ, ຄ່າບໍລິການ, ໜີ້ສິນ, ຄ່າແຮງງານ ແລະ ອື່ນໆ ຢູ່ ສປປ ລາວ ແລະ ຍັງມີມາດຕະການໃນການກຳນົດມູນຄ່າ, ການຕິດປະກາດ, ໂຄສະນາ ແລະ ການກຳກົດໂຄງສ້າງລາຄາກໍຕ້ອງໄດຄິດໄລ່ເປັນສະກຸນເງິນກີບເທົ່ານັ້ນ.

**ຄວາມຄິດເຫັນກ່ຽວກັບບັນຫາ ແລະ ອຸປະສັກ ໃນການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ** ເຫັນວ່າ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ມີບັນຫາໃນລະດັບປານກາງ ໂດຍມີຄ່າສະເລ່ຍ ເທົ່າກັບ 3.05; ວິທີການໃນການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ມີບັນຫາໃນລະດັບຫຼາຍ ໂດຍມີຄ່າສະເລ່ຍເທົ່າກັບ 3.63; ການຄຸ້ມຄອງຜູ້ປະກອບການບໍ່ໃຫ້ຊື້ຂາຍແລກປ່ຽນ ເງິນຕາຕ່າງປະເທດແບບຊະຊາຍໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ມີບັນຫາໃນລະດັບປານກາງ ໂດຍມີຄ່າສະເລ່ຍ ເທົ່າກັບ 2.90; ການຄຸ້ມຄອງປະຊາຊົນບໍ່ໃຫ້ຊື້ຂາຍແລກປ່ຽນ ເງິນຕາຕ່າງປະເທດແບບຊະຊາຍໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ມີບັນຫາໃນລະດັບປານກາງ ໂດຍມີຄ່າສະເລ່ຍ ເທົ່າກັບ 2.79; ການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ຂອງໜ່ວຍງານທີ່ກ່ຽວຂ້ອງມີບັນຫາໃນລະດັບປານກາງ ໂດຍມີຄ່າສະເລ່ຍ ເທົ່າກັບ 2.64. ຊຶ່ງສອດຄ່ອງກັບຄຳສຳພາດທີ່ວ່າ ບັນຫາໃນການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດມາຈາກຂະແໜງການທີ່ກ່ຽວຂ້ອງພາກລັດ ແລະ ການເປັນເຈົ້າການຂອງປະຊາຊົນ ແລະ ຜູ້ປະກອບການທຸລະກິດເອງ ຍັງບໍ່ທັນເຂົ້າໃຈເລິກເຊິ່ງໃນລະບຽບການກ່ຽວກັບການຄຸ້ມຄອງເງິນຕາ ສາເຫດຍ້ອນຂາດການປະສານງານ ແລະ ເຜີຍແຜ່ຂໍ້ມູນກ່ຽວກັບວິທີການໃນການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດເທົ່າທີ່ຄວນ ເຊັ່ນ ຂາດລະບຽບການສະເພາະເຈາະຈົງໃນການຈັດຕັ້ງປະຕິບັດ; ກະແສເງິນຕາຕ່າງປະເທດຈາກຫຼາຍແຫຼ່ງຍັງບໍ່ຜ່ານລະບົບທະນາຄານເທົ່າທີ່ຄວນ ໃນຂະນະທີ່ຄວາມຕ້ອງການເງິນຕາເພື່ອຊຳລະຈາກຕ່າງປະເທດຂອງຫົວໜ່ວຍທຸລະກິດມີຫຼາຍ; ຍັງບໍ່ທັນມີລະບົບຕິດຕາມຄຸ້ມຄອງຫົວໜ່ວຍຜູ້ມີລາຍຮັບຈາກການສົ່ງອອກ, ການລົງທະບຽນ, ການມີບັນຊີສະເພາະ, ການຄຸ້ມຄອງກະແສເງິນຕາຈາກການອະນຸຍາດກູ້ຢືມຕ່າງປະເທດຢ່າງຮັດກຸມ, ການຄຸ້ມຄອງລາຍຮັບເງິນຕາຈາກແຮງງານ, ການທ່ອງທ່ຽວ, ເງິນຊ່ວຍເຫຼືອ ແຫຼ່ງເງິນຕາເຫຼົ່ານີ້ ເຂົ້າມາຍັງບໍ່ທັນມີການຄຸ້ມຄອງຢ່າງຮັດກຸມ.

**ຄວາມຄິດເຫັນກ່ຽວກັບແນວທາງໃນການການແກ້ໄຂບັນຫາການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ** ເຫັນວ່າ ຄວນເພີ່ມມາດຕະການໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວໃນລະດັບຫຼາຍໂດຍມີຄ່າສະເລ່ຍ ເທົ່າກັບ 4.20; ຄວນຊອກຫາວິທີໃນການລົງກວດກາການນຳໃຊ້ເງິນຕາຕ່າງປະເທດໃຫ້ມີຄວາມເປັນເອກະພາບກັນໃນລະດັບຫຼາຍ ໂດຍມີຄ່າສະເລ່ຍ ເທົ່າກັບ 4.03; ຄວນໃຫ້ເຜີຍແຜ່ລະບຽບການກ່ຽວກັບການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃຫ້ແກ່ຜູ້ປະກອບການ ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວໃນລະດັບຫຼາຍທີ່ສຸດໂດຍມີຄ່າສະເລ່ຍ ເທົ່າກັບ 4.58; ຄວນເຜີຍແຜ່ລະບຽບການກ່ຽວກັບການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃຫ້

ແກ່ປະຊາຊົນ ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ໃນລະດັບຫຼາຍທີ່ສຸດໂດຍມີຄ່າສະເລ່ຍ ເທົ່າກັບ 4.41; ຄວນຝຶກອົບຮົມໃຫ້ໜ່ວຍງານທີ່ຮັບຜິດຊອບກ່ຽວກັບວຽກງານການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ໃນລະດັບຫຼາຍທີ່ສຸດໂດຍມີຄ່າສະເລ່ຍ ເທົ່າກັບ 4.28. ຊຶ່ງສອດຄ່ອງກັບຄຳສຳພາດທີ່ວ່າຄວນເປັນເຈົ້າການໃນການຈັດຕັ້ງປະຕິບັດນິຕິກຳຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ໄດ້ຮັບຜົນດີ ໂດຍສະເພາະຂັ້ນທ້ອງຖິ່ນຕ້ອງມີການຜັນຂະຫຍາຍນິຕິກຳຕ່າງໆໃຫ້ເປັນອັນສະເພາະສາມາດຈັດຕັ້ງປະຕິບັດໄດ້ທ່ວງທັນຕາມກຳນົດເວລາ; ລັດຖະບານ ຄວນມີການປະສານງານກັນລະຫວ່າງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນໃນເລື່ອງຂອງມາດຕະການທີ່ໃຊ້ເພື່ອແກ້ໄຂບັນຫາໃຫ້ເປັນອັນລວມ ແລ້ວຜັນຂະຫຍາຍໃຫ້ເປັນອັນສະເພາະຂອງແຕ່ລະທ້ອງຖິ່ນເອງ; ຄວນມີໜ່ວຍງານທີ່ຮັບຜິດຊອບເປັນວຽກງານສະເພາະໃນການຄຸ້ມຄອງເພື່ອພິຈາລະນາໃນການອອກໃບອະນຸຍາດ ແລະ ດຳເນີນທຸລະກິດທີ່ຕິດພັນກັບການນຳໃຊ້ເງິນຕາຕ່າງປະເທດ.

**ສະຫຼຸບຜົນການສຶກສາ**

ການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ-19 ຍັງຄົງມີບັນຫາ ແລະ ຄວາມທ້າທາຍ. ນິຕິກຳທີ່ມີຢູ່ແມ່ນມີຄວາມສອດຄ່ອງກັບການຈັດຕັ້ງປະຕິບັດໃນລະດັບປານກາງ, ແຕ່ວິທີການຄຸ້ມຄອງຕົວຈິງຍັງມີບັນຫາໃນລະດັບຫຼາຍ. ບັນຫາທີ່ສຳຄັນປະກອບດ້ວຍ: ການໃຊ້ເງິນຕາຕ່າງປະເທດຫຼາຍສະກຸນເງິນໃນການຊຳລະ, ການຖືຄອງເງິນຕາໃນຮູບແບບເງິນສົດນອກລະບົບທະນາຄານ, ການປະສານງານລະຫວ່າງໜ່ວຍງານພາກລັດທີ່ຍັງຂາດປະສິດທິພາບ, ແລະ ການບັງຄັບໃຊ້ກົດໝາຍທີ່ບໍ່ເຂັ້ມງວດ. ບັນຫາເຫຼົ່ານີ້ເຮັດໃຫ້ການຄຸ້ມຄອງນະໂຍບາຍເງິນຕາບໍ່ມີປະສິດທິພາບ ແລະ ສົ່ງຜົນກະທົບຕໍ່ສະຖຽນລະພາບຂອງຄ່າເງິນກີບ.

**ຂໍ້ສະເໜີແນະ**

ຈາກຜົນການສຶກສາ, ຄະນະຄົ້ນຄວ້າຈຶ່ງມີຂໍ້ສະເໜີດັ່ງນີ້:

**ດ້ານນິຕິກຳ:** ທະນາຄານແຫ່ງ ສປປ ລາວ ຄວນພິຈາລະນາປັບປຸງນິຕິກຳໃຫ້ເຂັ້ມງວດຂຶ້ນ, ໂດຍສະເພາະການຈຳກັດການຖືຄອງເງິນສົດທີ່ເປັນເງິນຕາຕ່າງປະເທດ ແລະ ຫ້າມການຊຳລະຄ່າສິນຄ້າ ແລະ ບໍລິການພາຍໃນປະເທດເປັນເງິນຕາຕ່າງປະເທດຢ່າງເດັດຂາດ.

**ດ້ານການເຜີຍແຜ່:** ຕ້ອງເພີ່ມທະວີການເຜີຍແຜ່ນະໂຍບາຍ, ນິຕິກຳ ແລະ ຫຼັກການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ, ຜູ້ປະກອບການ ແລະ ປະຊາຊົນທົ່ວໄປໄດ້ຮັບຊາບ, ເຂົ້າໃຈຢ່າງທົ່ວເຖິງ ແລະ ຕໍ່ເນື່ອງ.

**ດ້ານກົນໄກການປະສານງານ:** ສ້າງກົນໄກປະສານງານທີ່ຊັດເຈນ ແລະ ເປັນເອກະພາບລະຫວ່າງຂະແໜງການທີ່ກ່ຽວຂ້ອງ (ທະນາຄານ, ຕຳຫຼວດ, ພາສີ, ການຄ້າ) ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຕິດຕາມກວດກາການນຳໃຊ້ເງິນຕາຢ່າງໃກ້ຊິດຕິດແທດ.

**ດ້ານການບັງຄັບໃຊ້ມາດຕະການ:** ຕ້ອງມີມາດຕະການລົງໂທດທີ່ເຂັ້ມງວດ ແລະ ເດັດຂາດຕໍ່ຜູ້ລະເມີດລະບຽບກົດໝາຍກ່ຽວກັບການນຳໃຊ້ເງິນຕາຕ່າງປະເທດ ເພື່ອສ້າງຄວາມຢຳເກງ.

**ດ້ານການພັດທະນາບຸກຄະລາກອນ:** ຈັດຝຶກອົບຮົມໃຫ້ພະນັກງານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບນິຕິກຳ ແລະ ວິທີການຄຸ້ມຄອງທີ່ທັນສະໄໝ.

**ເອກະສານອ້າງອີງ**


ກະຊວງແຜນການ ແລະ ການລົງທຶນ. (2022). *ບົດລາຍງານອັດຕາເງິນເຟີ້ ຂອງ ສປປ ລາວ ປະຈຳເດືອນ ກຸມພາ 2022.*

ແສງຈັນ ຈັນທະເສນ ແລະ ຄະນະ. (2006). *ປຶ້ມແບບຮຽນເສດຖະສາດມະຫາພາກ*. ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ: ມະຫາວິທະຍາໄລແຫ່ງຊາດ.

ສະຖາບັນການ ເມືອງ ແລະ ການປົກຄອງ ແຫ່ງຊາດ. (2003). *ປຶ້ມແບບຮຽນບາງບັນຫາພື້ນຖານ ກ່ຽວກັບການຄຸ້ມຄອງເສດຖະກິດໃນປະເທດ.*

ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ. (2022). *ສະພາບເສດຖະກິດມະຫາພາກ ຂອງ ສປປ ລາວ ໃນປີ 2021 ແລະ ທ່າອ່ຽງປີ 2022.*

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ. (2020). *ບົດລາຍງານຜົນໄດ້ຮັບຈາກການສຳຫຼວດຜົນກະທົບຂອງ COVID-19 ຕໍ່ກັບພາກທຸລະກິດ.*

ສະພາແຫ່ງຊາດ. (2018). *ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ.*

ສະພາແຫ່ງຊາດ. (2021). *ມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ....*

ສະພາແຫ່ງຊາດ. (2022). *ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ*.

ສຸພັກສອນ ອິນທະວົງ. (2021). *ການຄຸ້ມຄອງເງິນຕາຕ່າງປະເທດ ກໍລະນີສຶກສາ: ການຍັ້ງຢືນທຶນຂອງຜູ້ລົງທຶນຕ່າງປະເທດ ຢູ່ ສປປ ລາວ*. ວິທະຍານິພົນປະລິນຍາໂທ, ມະຫາວິທະຍາໄລແຫ່ງຊາດລາວ.

ທະນາຄານແຫ່ງ ສປປ ລາວ. (2020). *ບົດຄວາມຜູ້ວ່າການທະນາຄານແຫ່ງ ສປປ ລາວ ຊີ້ແຈງບັນຫາສຳຄັນຕໍ່ສະພາແຫ່ງຊາດ*.

ພຸດທະສອນ ວັດນຸວົງ. (2013). *ປັດໄຈທີ່ມີອິດທິພົນຕໍ່ການນຳໃຊ້ເງິນຕາຕ່າງປະເທດ ໃນການຊຳລະສະສາງຂອງປະຊາຊົນຕາມຊາຍແດນລາວ-ໄທ*. ວິທະຍານິພົນ, ມະຫາວິທະຍາໄລແຫ່ງຊາດ.

ວິໄລວັນ ພູທິສອນ. (2020). *ສຶກສາປັດໄຈທີ່ມີຜົນຕໍ່ການນຳໃຊ້ເງິນຕາຫຼາຍສະກຸນຂອງ ສປປ ລາວ*. ວິທະຍານິພົນ, ມະຫາວິທະຍາໄລແຫ່ງຊາດ.

Duma, N. (2011). *Dollarization in Cambodia: Causes and Policy implication*. IMF Working Paper, WP/11/49.

Friedman, M. (1987). The Quantity Theory of Money. In *The New Palgrave: A Dictionary of Economics*. Palgrave Macmillan.

Jayant Menon. (2007). *Dollarization and the Multiple Currency phenomenon in lao PDR: Costs, benefit and policy options*. Asian Development Bank Institute.

Schumpeter, J. A. (1952). *Ten Great Economists from Marx to Keynes*. Retrieved from http://digamo.free.fr/ten10.pdf